ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ກະຊວງ ອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 1068 /ຫອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ 08 ເມສາ 2013.

# ແຈ້ງການ

ເຖິງ : ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ບັນດາເມືອງ ໃນຂອບເຂດທົ່ວປະເທດ.

ເລື່ອງ : ການນຳໃຊ້ແບບຟອມ ເຂົ້າໃນວຽກງານກວດກາການຄ້າ.

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບ ເລກທີ 522/ນຍ, ລົງວັນທີ 23 ທັນວາ 2011;
- ອີງຕາມ ດຳລັດ ຂອງ ນາຍົກລັດຖະມົນຕີ ວ່າດ້ວຍການກວດກາການຄ້າ ສະບັບເລກທີ 508/ລບ, ລົງວັນທີ 04/12/2012;
- ອີງຕາມ ຂໍ້ຕົກລົງ ຂອງ ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ວ່າດ້ວຍລະບຽບການປະຕິບັດວຽກງານກວດກາການຄ້າ ສະບັບເລກທີ 2552/ອຄ.ຄພນ, ລົງວັນທີ 14 ທັນວາ 2012.

ຫ້ອງການ ກະຊວງ ອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງ ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ຊາບວ່າ: ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ມີຄວາມສະດວກ ແລະເປັນເອກະພາບກັນໃນຂອບເຂດທົ່ວປະເທດ ແລະ ສອດຄ່ອງກັບບັນດານິຕິກຳກ່ຽວກັບວຽກງານກວດກາການຄ້າ.

ຫົວໜ້າຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າອອກແຈ້ງການດັ່ງນີ້:

1. ໃຫ້ນຳໃຊ້ແບບຟອມກວດກາການຄ້າເຂົ້າໃນການເຄື່ອນໄຫວວຽກງານກວດກາການຄ້າຕາມ 9 ແບບຟອມທີ່ກົມການຄ້າພາຍໃນ (ອີງການປະຕິບັດວຽກງານກວດກາການຄ້າຂັ້ນສູນກາງ) ໄດ້ກຳນົດ: (ແບບຟອມຄັດຕິດມາພ້ອມນີ້)
2. ການຂຽນໃສ່ປຶ້ມແບບຟອມດັ່ງກ່າວ ຕ້ອງມີຄວາມຊັດເຈນ, ສະອາດ ບໍ່ມີຮອຍຂີດ-ຂ້າ ຖ້າຊຸດໃດມີຮອຍຂີດ-ຂ້າ, ຮອຍລົບເປິະເປື້ອນ ແມ່ນບໍ່ສາມາດນຳໃຊ້ໄດ້. ໃຫ້ພັບປະໄວ້ຢູ່ປຶ້ມ (ບໍ່ໃຫ້ຈີກອອກ) ນີ້ກໍ່ເພື່ອສະດວກໃນການຕິດ

ຕາມກວດກາ, ແບບຟອມກວດກາການຄ້າ ທັງ 9 ແບບຟອມ ແຕ່ລະຊຸດປະກອບມີ ສາມໃບ (ສາມສີ) ຊຶ່ງນຳໃຊ້ຕ່າງກັນ ດັ່ງນີ້:

1. ສີຂາວ ເກັບສຳນວນ ການລະເມີດ (ຄະດີ)
2. ສີຂຽວ ໃຫ້ຜູ້ຖືກກວດກາ
3. ສີບົວ ເກັບສຳເນົາໄວ້ ອີງການປະຕິບັດວຽກງານກວດກາການຄ້າ

3. ເພື່ອນຳໃຊ້ເປັນເອກະພາບກັນໃນຂອບເຂດທົ່ວປະເທດ ມອບໃຫ້ກົມການຄ້າພາຍໃນເປັນຜູ້ກຳນົດລະອຽດກ່ຽວກັບການນຳໃຊ້ແບບຟອມດັ່ງກ່າວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະຈັດຕັ້ງປະຕິບັດຕາມນີ້ດ້ວຍ.

ຫົວໜ້າຫ້ອງການ

ກະຊວງອຸດສາຫະກຳ ແລະ ການຄ້າ

ບຸນມີ ມະນີວົງ

<u>ບ່ອນສົ່ງ</u>

- ທ່ານ ລມຕ, ລມຕຊ່ວຍວ່າການ ທ່ານ ລະ 01 ສະບັບ ເພື່ອລາຍງານ
- ຫ້ອງການ ກະຊວງການເງິນ 01 ສະບັບ ເພື່ອຊາບ
- ຫ້ອງການ ກະຊວງກະສິກຳ ແລະປ່າໄມ້ 01 ສະບັບ ເພື່ອຊາບ
- ບັນດາກົມ, ສະຖາບັນ ພາກສ່ວນລະ 01 ສະບັບ ເພື່ອຊາບ
- ເກັບສຳເນົາ 01 ສະບັບ

098 21 1365

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ກະຊວງ ອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ເລກທີ 0355 /ກພນ.ກກຄ

ນະຄອນຫຼວງວຽງຈັນ, ວັນທີ 26 Apr 2013

ຮຽນ : ທ່ານຫົວໜ້າ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ.

ເລື່ອງ : ການນຳໃຊ້ແບບຟອມເຂົ້າໃນວຽກງານກວດກາການຄ້າ.

- ອີງຕາມ ດຳລັດ ນາຍົກລັດຖະມົນຕີ ວ່າດ້ວຍການກວດກາການຄ້າ ເລກທີ 508/ລບ, ລົງວັນທີ 04/12/2012;
- ອີງຕາມ ຂໍ້ຕົກລົງ ຂອງທ່ານ ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 2250/ອຄ.ຈພງ, ລົງວັນທີ 23 ຕຸລາ 2012 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກົມການຄ້າ ພາຍໃນ;
- ອີງຕາມ ແຈ້ງການ ຂອງຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1068/ຫອຄ.ຄພນ, ລົງວັນທີ 08 ເມສາ 2013.

ໂດຍປະຕິບັດຕາມແຈ້ງການຂອງຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ, ສະບັບເລກທີ 1068/ຫອຄ.ຄພນ, ລົງວັນທີ 08 ເມສາ 2013 ກ່ຽວກັບ ການນຳໃຊ້ແບບຟອມ ເຂົ້າໃນວຽກງານກວດກາການຄ້າ, ເພື່ອເຮັດໃຫ້ການນຳໃຊ້ແບບຟອມເຂົ້າໃນວຽກງານກວດກາການຄ້າໃຫ້ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ, ມີຄວາມສະດວກໃນການຈັດຕັ້ງປະຕິບັດວຽກງານ ແລະສະດວກໃນການຕິດຕາມກວດກາ.

ກົມການຄ້າພາຍໃນ ຂໍແຈ້ງມາຍັງທ່ານດັ່ງນີ້:

1. ກົມການຄ້າພາຍໃນຈະໄດ້ມີການຈັດພິມປຶ້ມແບບຟອມຢູ່ໂຮງພິມ ຕາມຂະໜາດເຈ້ຍ A4, ຊຸດ 1 ມີສາມໃບ (ສາມສີ) ສາມາດຂຽນຊອດໃສ່ກັນລະຫວ່າງໃບທີ 1, 2 ແລະ3, ປຶ້ມຫົວໜຶ່ງ (ແບບຟອມ 1) ມີ 50 ຊຸດ, ລວມມີ 09 ແບບຟອມ;

2. ການນຳໃຊ້ປຶ້ມແບບຟອມດັ່ງກ່າວ ແມ່ນຈະເລີ່ມຕົ້ນຈັດຕັ້ງປະຕິບັດເປັນເອກະພາບກັນໃນຂອບ ເຂດທົ່ວປະເທດ ໃນວັນທີ 01/06/2013 ເປັນຕົ້ນໄປ;

3. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ຂຶ້ນແຜນການນຳໃຊ້ແບບຟອມ ພ້ອມທັງສັງລວມແຜນການນຳໃຊ້ຂອງບັນດາເມືອງ ແລ້ວສົ່ງມາຍັງ ກົມການຄ້າພາຍໃນ ກ່ອນວັນທີ 15/05/2013 ເພື່ອຈະສັ່ງໂຮງພິມໃຫ້ທັນກັບເວລາທີ່ກຳນົດໄວ້;

4. ສຳລັບງົບປະມານໃນການຊຳລະຄ່າພິມປຶ້ມແບບຟອມ ການກວດກາການຄ້າຂອງອີງການປະຕິບັດວຽກງານກວດກາການຄ້າຂັ້ນໃດ ແມ່ນນຳໃຊ້ງົບປະມານຂອງຂັ້ນນັ້ນ;

5. ຄ່າຜະລິດແບບຟອມກວດກາການຄ້າ ແມ່ນ 50.000 ກີບ / ໜຶ່ງຫົວ (ໜຶ່ງແບບຟອມ), ລວມທັງໝົດ 09 ແບບຟອມ x 50.000 ກີບ = 450.000 ກີບ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມແຈ້ງການນີ້ດ້ວຍ.

ຫົວໜ້າກົມການຄ້າພາຍໃນ

ເພື່ອນ ຍົງວົງສີດາທີ

ເບີຕິດຕໍ່

ນ. ວຽງຄຳ ພຸດທະວົງ 55331103, 021 412014